ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 35 /ຫກ

ນະຄອນຫລວງວຽງຈັນ, ວັນທີ 16 ກຸມພາ 2023

# ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

ເຖິງ : ບໍລິສັດຮັບເໝົາກໍ່ສ້າງເຄຫາສະຖານ.

ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນ ເພື່ອຮັບເໝົາປັບປຸງ ແລະ ສ້ອມແປງຫ້ອງພັກຕຳຫຼວດປ້ອງກັນ ທຫລ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດກໍ່ສ້າງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນຮັບເໝົາປັບປຸງ ແລະ ສ້ອມແປງຫ້ອງພັກຕຳຫຼວດປ້ອງກັນ ທຫລ; ສຳລັບເງື່ອນໄຂຂອງການປະມູນ ແມ່ນມີລາຍລະອຽດ ດັ່ງນີ້:

**I. ເອກະສານຊອງປະມູນ**

ບໍລິສັດທີ່ມີຄວາມສົນໃຈ ສາມາດພົວພັນເອົາເອກະສານຊອງປະມູນ ເລີ່ມແຕ່ມື້ອອກແຈ້ງເຊີນເຂົ້າຮ່ວມປະມູນເປັນຕົ້ນໄປ ຮອດວັນທີ 24/02/2023 ທີ່ຫ້ອງການ ທະນາຄານແຫ່ງ ສປປ ລາວ, ສຳນັກງານຕັ້ງຢູ່ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ (ພະແນກບໍລິຫານ ເບີໂທ 021 241 268).

**II. ເງື່ອນໄຂເບື້ອງຕົ້ນຂອງຜູ້ເຂົ້າຮ່ວມປະມູນ**

1. ເປັນບໍລິສັດ ຫຼື ວິສາຫະກິດຫຸ້ນສ່ວນ ທີ່ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ເລກປະຈຳຕົວຜູ້ເສຍອາກອນ, ໃບຢັ້ງຢືນການປະຕິບັດພັນທະພາສີອາກອນອັບເດດປະຈຳສົກປີ ແລະ ພັນທະອື່ນໆຖືກຕ້ອງຕາມກົດໝາຍ.
2. ມີການຢັ້ງຢືນກ່ຽວກັບຜົນງານ, ປະສົບການດຳເນີນທຸລະກິດທີ່ກ່ຽວຂ້ອງຢ່າງຕ່ຳ 3-5 ປີ ຂຶ້ນໄປ, ຄວາມສາມາດດ້ານເຕັກນິກວິຊາການ ແລະ ການດຳເນີນທຸລະກິດທີ່ມີຄຸນນະພາບດີ ໃນວຽກງານການກໍ່ສ້າງ ແລະ ສ້ອມແປງອາຄານ ແລະ ສະຖານທີ່;
3. ຕ້ອງມີໃບແຈ້ງຖານະການເງິນທີ່ຍັງເຫຼືອໃນບັນຊີເງິນຝາກຂອງບໍລິສັດ ຢູ່ທະນາຄານທຸລະກິດໃດໜຶ່ງ, ມີກຳນົດເວລາບໍ່ເກີນ 30 ວັນ ຫຼື ເປັນໜັງສືຄ້ຳປະກັນຈາກທະນາຄານທຸລະກິດໃດກໍ່ໄດ້;
4. ບໍ່ເປັນຜູ້ທີ່ມີຜົນປະໂຫຍດຊ້ຳຊ້ອນທີ່ກ່ຽວຂ້ອງກັບການຈັດຊື້-ຈັດຈ້າງກັບວຽກງານດັ່ງກ່າວ ເຊັ່ນ: ເປັນຜູ້ທີ່ມີສ່ວນຮ່ວມ ຫຼື ກະກຽມເອກະສານການປະມູນ.

**III. ການຍື່ນຊອງປະມູນ**

1. ບໍລິສັດທີ່ເຂົ້າຮ່ວມປະມູນຕ້ອງຖືຊອງປະມູນມາດ້ວຍຕົນເອງ ແລະ ຖ້າປະທານບໍລິສັດບໍ່ສາມາດເຂົ້າຮ່ວມໄດ້ແມ່ນໃຫ້ເຮັດໃບມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມແທນ;
2. ການຍື່ນຊອງປະມູນ ແມ່ນຕ້ອງຍື່ນເອກະສານແບບປິດຊອງປະມູນ; ສ່ວນວັນເວລາເປີດຊອງປະມູນແມ່ນຈະແຈ້ງໃຫ້ຊາບຕາມພາຍຫຼັງ.

**IV. ຄ່າທຳນຽມ**

ສຳລັບຄ່າທຳນຽມ ຂອງຊອງປະມູນ ມີມູນຄ່າ **2.000.000** ກີບ/ຊອງ, ເງິນທີ່ຂາຍຊອງປະມູນ ທາງຫ້ອງການທຫລ ຈະບໍ່ສົ່ງຄືນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດກໍ່ສ້າງທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນໃນຄັ້ງນີ້ດ້ວຍ.

ຣ. ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຸກັນ ຈັນທະວົງ